# ເອກະສານອ້າງອີງ

## ການປະກາດຫາທີ່ປຶກສາການພັດທະນາແບບສຳຫລວດ

ກຳນົດເວລາສົ່ງໃບສະໝັກ: **ວັນທີ 14 ເດືອນຕຸລາ 2025**

**ພາສາ: ລາວ ແລະ ອັງກິດ**

ໄລຍະເວລາໃນການປະຕິບັດໜ້າທີ່: **5 ວັນ ໃນໄລຍະເວລາ 2 ອາທິດ ເລີ່ມຈາກວັນທີ 20 ເດືອນ ຕຸລາ 2025**

**ພາກນຳສະເໜີ**

ອົງການຂອດ (Cord) ແມ່ນອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ເຊິ່ງມີສຳນັກງານໃຫ່ຍ ຢູ່ສະຫະລາຊະ ອານາຈັກອັງກິດ ແລະ ມີທີມງານດຳເນີນງານ ຢູ່ສປປ ລາວ. ອົງການ ຂອດ ມີປະສົບການຫຼາຍກວ່າ 50 ປີໃນການ ເຮັດວຽກດ້ານມະນຸດສະທຳ ແລະ ວຽກງານການພັດທະນາກັບຊຸມຊົນໃນທົ່ວໂລກທີ່ຮັບຜົນກະທົບຈາກ ຄວາມ ຂັດແຍ້ງ. ອົງການ ຂອດ ເຊື່ອວ່າ ຜູ້ຄົນ ຈະສາມາດພັດທະນາເຕີບໂຕ ແລະ ມີຊີວິດທີ່ດີໄດ້ກໍ່ຕໍ່ເມື່ອມີຄວາມສຳພັນ ທີ່ ແຂງແຮງລະຫວ່າງພາກລັດ, ພາກການຈັດຕັ້ງສັງຄົມ ແລະພາກສ່ວນເອກະຊົນ ໃນການສ້າງພື້ນທີ່ເອື້ອອຳນວຍ ໃນການສົນທະນາ, ການແກ້ໄຂຂໍ້ຂັດແຍ້ງ ແລະ ການສ້າງຄວາມໄວ້ວາງໃຈ. ການສ້າງພື້ນທີດັ່ງກ່າວນີ້ຈະນຳໄປສູ່ ການພັດທະນາທີ່ມີສ່ວນຮ່ວມຫຼາຍຂື້ນ, ມີການບໍລິຫານຄຸ້ມຄອງທີ່ດີຂື້ນ ແລະ ການປົກປ້ອງສິດທິຂອງປະຊາຊົນ.

ຫ້ອງການຂອງອົງການຂອດໄດ້ດຳເນີນການຈັດຕັ້ງປະຕິບັດຫຼາຍວຽກງານຢູ່ ສປປ ລາວ ຕັ້ງແຕ່ປີ 2011 ເປັນ ຕົ້ນ ມາ. ອົງການຂອດ ມີທີມງານທີ່ປະກອບໄປດ້ວຍພະນັກງານທີ່ມີຄວາມຊຳນານຫຼາຍສາຂາທີ່ດຳເນີນກິດຈະກຳເພື່ອ ພັດທະນາຂີດຄວາມສາມາດຂອງຊຸມຊົນ, ພາກອົງການຈັດຕັ້ງສັງຄົມ ແລະ ຄູ່ຮ່ວມງານພາກລັດ. ອົງການຂອດ ເຮັດວຽກຮ່ວມມືກັບພາກສ່ວນທີ່ຫຼາກຫຼາຍ ແລະ ມີໂຄງການທີ່ໄດ້ຮັບການສະໜັບສະໜູນຈາກຫລາຍຜູ້ໃຫ້ທຶນ ແລະ ພາກສ່ວນຮ່ວມມືຫຼາຍຝ່າຍຂອງຫລາກຫລາຍແຜນງານ.

**ລາຍລະອຽດກ່ຽວກັບໂຄງການ**

ໂຄງການ ສົ່ງເສີມການເຂົ້າເຖິງລະບຽບກົດໝາຍ ແລະ ຄວາມເຂົ້າໃຈຖືກຕ້ອງກ່ຽວກັບວຽກງານສາສະໜາສຳພັນໃນ ສປປ ລາວ ໂດຍການນຳພາຂອງກົມສາສະໜາ ສູນກາງແນວລາວສ້າງຊາດ ແລະ ກົມສາສະໜາແລະ ຊົນເຜົ່າ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ. ໂຄງການ ສົ່ງເສີມການເຂົ້າເຖິງລະບຽບກົດໝາຍ ແລະ ຄວາມເຂົ້າໃຈ ຖືກຕ້ອງກ່ຽວກັບວຽກງານສາສະໜາໃນ ສປປ ລາວ  ຫລື (PLURAL) ແນ່ໃສ່ເພີ່ມທະວີ ການຈັດຕັ້ງ ປະຕິບັດດຳລັດ

ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວວຽກງານ ສາສະໜາ ( ດໍາລັດ 315/ລບ ), ສົ່ງເສີມ ຄວາມເຂົ້າໃຈກ່ຽວກັບຄວາມເຊື່ອຂອງປະຊາຊົນບັນດາເຜົ່າ ແລະ ລວບລວມເອກະສານຖອດຖອນບົດຮຽນເພື່ອສະໜັບສະໜູນການຜັນຂະຫຍາຍ ແລະ ການພັດທະນາ ນະໂຍບາຍ.

**ຈຸດປະສົງ** ແລະ ຂອບເຂດ**ແຜນວຽກ**ການໃຫ້ຄໍາປຶກສາ

**ຈຸດປະສົງ**ຂອງການໃຫ້ຄໍາປຶກສາ

ເພື່ອອອກແບບແບບສໍາຫລວດເບື້ອງຕົ້ນທີ່ຄົບຖ້ວນ ແລະ ມີວິທີການທາງຫລັກການທີ່ຖືກຕ້ອງ ເພື່ອນໍາໃຊ້ການ ສໍາຫລວດເຂົ້າໃນໂຄງການທົດລອງນີ້ ທີ່ຈະຄອບຄຸມ 31 ເມືອງ ໃນຂົງເຂດແຂວງວຽງຈັນ, ນະຄອນຫຼວງວຽງຈັນ ແລະ ແຂວງຫລວງພະບາງ ເຊິ່ງການສໍາຫຼວດແມ່ນ ຈະດໍາເນີນຜ່ານລະບົບອອນລາຍ. ຈຸດປະສົງຫຼັກ ຂອງການສໍາຫຼວດ ເບື້ອງຕົ້ນນີ້ແມ່ນເພື່ອເກັບຂໍ້ມູນທີ່ຈໍາເປັນ ສໍາລັບການຕິດຕາມຜົນກະທົບຂອງ ໂຄງການ ໂດຍອີງໃສ່ກອບແຜນວຽກ ແລະ ຕົວຊີ້ວັດທີ່ກໍານົດໄວ້. ນອກຈາກນັ້ນຍັງໃຊ້ເປັນແນວທາງໃນການປັບປຸງ ຫຼື ພັດທະນາຫຼັກສູດຝຶກອົບຮົມ ທີ່ມຸ່ງເນັ້ນໃຫ້ແກ່ຜູ້ມີສ່ວນຮ່ວມພາກລັດໃນຂັ້ນທ້ອງຖິ່ນ ແລະ ໃຊ້ໃນການ ພັດທະນາຈັດກຽມເອກະສານສື່ສິ່ງພິມເພື່ອເຜີຍແຜ່ໃຫ້ແກ່ປະຊາຊົນທົ່ວໄປ. ຜູ້ໃຫ້ຄໍາປຶກສາຈະຮັບຜິດຊອບ ໃນການພັດທະນາກອບແຜນວຽກຂອງການສໍາຫຼວດ, ກໍານົດເຄື່ອງມື ແລະ ເອກະສານແນະນໍາທີ່ຈໍາເປັນ ແຕ່ຈະບໍ່ ເຂົ້າຮ່ວມໃນຂະບວນການເກັບຂໍ້ມູນ ຫຼື ການ ວິເຄາະຂໍ້ມູນ.

ຂອບເຂດ**ແຜນວຽກ**ຂອງການໃຫ້ຄໍາປຶກສາ

ທີ່ປຶກສາຈະດໍາເນີນອີງຕາມວຽກດັ່ງຕໍ່ໄປນີ້:

- ສຶກສາເອກະສານໂຄງການເພື່ອເຂົ້າໃຈເປົ້າໝາຍ ປະຊາກອນເປົ້າໝາຍ ແລະ ຕົວຊີ້ວັດສໍາຄັນ.
- ພັດທະນາຮູບແບບການສໍາຫຼວດ, ປະກອບມີ:

- ກໍານົດຈຸດປະສົງ ແລະ ຄໍາຖາມວິໄຈທີ່ສໍາຄັນຂອງການສໍາຫລວດ;

- ກໍາໜົດກົນລະຍຸດການສຸ່ມຕົວຢ່າງ ທີ່ເໝາະສົມກັບການເກັບກໍາຂໍ້ມູນການສໍາຫລວດຜ່ານອອນລາຍ;
- ກໍາໜົດໂຄງສ້າງ ແລະ ເນື້ອໃນຂອງແບບສອບຖາມ;
- ກໍາໜົດຂັ້ນຕອນທີ່ມີຄວາມສອດຄ່ອງ (Logical flow ) ແລະ ຮູບແບບຂ້າມຄໍາຖາມ (skip patterns).

- ຮ່າງແບບສອບຖາມໃນແພລດຟອມສໍາຫຼວດອອນລາຍ KoboToolbox.
- ໃຫ້ແນ່ໃຈວ່າການສໍາຫລວດໄດ້ຄໍານຶງເຖິງຈັນຍາທໍາທາງຈິດໃຈ ເຊັ່ນ ການຍິນຍອມໃນການເຂົ້າຮ່ວມ ແລະ ຄວາມປອດໄພຂອງຂໍ້ມູນການສໍາຫລວດ.
- ສະໜອງຄູ່ມືການດໍາເນີນການສໍາຫລວດ, ປະກອບມີ:

- ຄໍາແນະນໍາຄໍາແນະນໍາໃນການຈັດການສໍາຫລວດຜ່ານອອນລາຍ;

- ຄໍາແນະນໍາກ່ຽວກັບການທົດລອງແບບສອບຖາມ ແລະ ການຮັບປະກັນຄຸນນະພາບຂອງຂໍ້ມູນ.

- ປັບປຸງເຄື່ອງມືການສໍາຫຼວດຕາມຄໍາແນະນໍາຂອງອົງການທີ່ຈ້າງງານ.

## ຜົນງານວຽກທີ່ຕ້ອງສົ່ງມອບ

ເອກະສານອອກແບບການສໍາຫຼວດ (ລວມທັງວິທີວິເຄາະ ແລະ ກົນລະຍຸດການສຸ່ມຕົວຢ່າງ);
ແບບສອບຖາມສໍາຫຼວດອອນລາຍສະບັບຮ່າງ;
ຄູ່ມືການດໍາເນີນການສໍາຫຼວດ;
ເອກະສານສະບັບສຸດທ້າຍທຸກສ່ວນ ທີ່ໄດ້ປັບປຸງຕາມຄໍາຄິດເຫັນ.

## ໄລຍະເວລາ (Timeline)

ວຽກງານການອອກແບບການສໍາຫລວດນີ້ຄາດວ່າຈະໃຫ້ສໍາເລັດພາຍໃນ 5 ວັນທໍາການ ເຊິ່ງຈະຢູ່ ໃນຊ່ວງໄລຍະ ເວລາ 2 ອາທິດ ໂດຍເລີ່ມຕັ້ງແຕ່ວັນທີ 20 ເດືອນຕຸລາ 2025.

## ຫຼັກການຄັດເລືອກ (Selection Criteria)

ມີປະສົບການທີ່ພິສູດໄດ້ໃນການອອກແບບການສໍາຫລວດ ໂດຍສະເພາະສໍາລັບແພລດຟອມອອນລາຍນ໌;
ເຂົ້າໃຈຢ່າງຈະແຈ້ງໃນວິທີວິເຄາະແບບປະລິມານ;
ຄຸ້ນເຄີຍກັບມາດຕະຖານຈັນຍາທໍາໃນການຄົ້ນຄວ້າ;
ທັກສະການສື່ສານເຂົ້າໃຈໄດ້ດີທາງລາຍລັກອັກສອນ(ການຂຽນ);
ສາມາດສື່ສານພາສາລາວ ແລະ ພາສາອັງກິດໄດ້ດີ ທັງໃນຮູບແບບຂຽນ ແລະ ເວົ້າ.

## ຂະບວນການສະໝັກ (Application Process)

ຄະນະກໍາມະການບໍລິຫານໂຄງການຂໍເຊີນຜູ້ສະໝັກສົ່ງບົດສະເໜີລາຍລະອຽດເອກະສານສະໝັກມາທີ່ ອີເມລ laosoffice@cord.org.uk  ພ້ອມກັບເນື້ອໃນດັ່ງຕໍ່ໄປນີ້:

1. ເອກະສານບົດສະເໜີບໍ່ເກີນ 1.5 ຫນ້າ ໃສ່ລາຍລະອຽດວິທີການຮູບແບບຂັ້ນຕອນ ແລະ ວິທີການໂດຍລວມໃນການ ດໍາເນີນການຂອງບົດບາດທີ່ປຶກສາ;
2. ກໍານົດແຜນວຽກ ແລະ ກອບເວລາ ລວມທັງງົບປະມານຄ່າໃຊ້ຈ່າຍ;
3. ຊີວະປະຫວັດຫຍໍ້ (CV) ຂອງຜູ້ສະເໜີໃນຕໍາແໜ່ງທີ່ປຶກສາ;
4. ທາງເລືອກ: ເອກະສານຜົນງານທີ່ຜ່ານມາທີ່ມີລັກສະນະກອບວຽກທີ່ຄ້າຍຄືກັນ.